**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ກົມຄວາມປອດໄພໄຊເບີ ເລກທີ 202 /ຄກຊ

ນະຄອນຫຼວງວຽງຈັນ, ວັນທີ 08 ພຶດສະພາ 2026

## ໜັງສືແຈ້ງເຊີນປະມູນ

1. ກົມກົມຄວາມປອດໄພໄຊເບີ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ຂໍເຊີນບັນດາບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນວຸດທິເໝາະສົມ ເຂົ້າຮ່ວມຍື່ນຊອງປະມູນ ສໍາລັບການສະໜອງວັດຖຸອຸປະກອນສ້າງເຄື່ອງມືການວິໄຈ ແລະ ວິເຄາະພຶດຕິກໍາການນໍາໃຊ້ສື່ສັງຄົມອອນລາຍຂອງ ສປປ ລາວ ປະຈໍາປີ 2026. ເຊິ່ງກໍານົດມອບ-ຮັບສິນຄ້າ ພາຍໃນ 60 ວັນ, ພາຍຫຼັງເຈົ້າຂອງໂຄງການ ອອກເອກະສານ ສັ່ງຊື້;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງອຸປະກອນສ້າງເຄື່ອງມືການວິໄຈ ແລະ ວິເຄາະພຶດຕິກໍາການນໍາໃຊ້ສື່ສັງຄົມອອນລາຍຂອງ ສປປ ລາວ;
4. ບໍລິສັດທີ່ສົນໃຈຊື້ເອກະສານປະມູນຄົບຊຸດເປັນພາສາລາວ ສາມາດຕິດຕໍ່ພົວພັນໄດ້ທີ່ ກົມຄວາມປອດໄພໄຊເບີ (ຕຶກສູນອິນເຕີເນັດ ແຫ່ງຊາດ ຊັ້ນ 6 ໂທລະສັບ: 021 254508) ຕັ້ງຢູ່: ຖະໜົນສາຍລົມ, ບ້ານ: ສາຍລົມ, ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ກົມຄວາມປອດໄພໄຊເບີ ໃນໂມງລັດຖະການ. ໃນລາຄາ 3,000,000 ກີບ/ຊອງ (ສາມລ້ານກີບ) ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ, ເລີ່ມຂາຍຊອງປະມູນ ແຕ່ວັນທີ 12 ພຶດສະພາ 2026.
5. ຊອງປະມູນຕ້ອງສົ່ງ ກ່ອນເວລາ 9:30 ໂມງ ຂອງວັນທີ 15 ມິຖຸນາ 2026 ທີ່ຫ້ອງ ປະຊຸມຊັ້ນ 06, ກົມຄວາມປອດໄພໄຊເບີ, ກະຊວງເຕັກ ໂນໂລຊີ ແລະ ການສື່ສານ,ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າເວລາທີ່ ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:30 ໂມງ ຂອງວັນທີ 15 ມິຖຸນາ 2026 ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກຊອງປະມູນຕ້ອງປະກອບການຄໍ້າປະກັນການປະມູນ ດ້ວຍເງິນສົດ ຫຼື ໜັງສືຄໍ້າປະກັນອອກໂດຍທະນາຄານ, ແຊັກ ບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ) ຂອງມູນຄ່າທີ່ສະເໜີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດ/ຫ້າງຮ້ານທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

**ຫົວໜ້າກົມ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ ກົມຄວາມປອດໄພໄຊເບີ

**ຄໍາຫຼ້າ ສຸນນະລັດ**

ໝາຍເຫດ:

ລາຍລະອຽດສອບຖາມເພີ່ມເຕີມ ກົມຄວາມປອດໄພໄຊເບີ

021 254508 ພະແນກສັງລວມ

020 55445463 ທ່ານ ວິລະພົງ ສຸລິຍະ ຮອງພະແນກຮ່ວມມືຄວາມປອດໄພໄຊເບີ